**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

*************************

**ສຳນັກງານນາຍົກລັດຖະມົນຕີ**

ເລກທີ: 275/ນຍ

ນະຄອນຫລວງວຽງຈັນ, ວັນທີ 25. 09. 2009

# ດຳລັດ
# ວ່າດ້ວຍຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ, ສະບັບເລກທີ 03/ສພຊ ລົງວັນທີ 26 ທັນວາ 2006;
- ອີງຕາມໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 717/ ທຫລ ລົງວັນທີ 10 ກັນຍາ 2009;

**ນາຍົກລັດຖະມົນຕີ ອອກດຳລັດ :**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ແນະນຳຈັດຕັ້ງປະຕິບັດບາງມາດຕາຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ໃຫ້ມີຄວາມຊັດເຈນ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:

2. "ໜ່ວຍບໍລິການທະນາຄານ" ໝາຍເຖິງພາກສ່ວນໜຶ່ງຂອງທະນາຄານທຸລະກິດ, ຖືກສ້າງຕັ້ງຂຶ້ນ ໂດຍທະນາຄານທຸລະກິດ ຫລື ສາຂາຂອງທະນາຄານທຸລະກິດ;
3. "ທຶນເປັນວັດຖຸ" ໝາຍເຖິງຊັບສິງທີ່ ແລະ ຊັບເຄື່ອນທີ່ ທີ່ຜູ້ຖືຮຸ້ນນຳ ມາປະກອບເປັນທຶນຈົດທະບຽນຂອງທະນາຄານທຸລະກິດ ຫລື ເງິນລົງທຶນຕ່ຳສຸດຂອງສາຂາທະນາຄານຕ່າງປະເທດ.

**ມາດຕາ 3. ການແຂ່ງຂັນທາງທຸລະກິດການທະນາຄານທີ່ຜິດກົດໝາຍ**

ລັດບໍ່ອະນຸຍາດໃຫ້ທະນາຄານທຸລະກິດແກ່ງແຍ່ງແຂ່ງຂັນທີ່ຜິດກົດໝາຍເຊັ່ນ: ການຜູກຂາດຕະຫລາດ, ການເຄື່ອນໄຫວທີ່ບໍ່ສອດຄ່ອງຕາມດຳລັດວ່າດ້ວຍການແຂ່ງຂັນການຄ້າ ສະບັບເລກທີ 15/ນຍ ລົງວັນທີ 04 ກຸມພາ 2004.

**ມາດຕາ 4. ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ຕໍ່ທະນາຄານທຸລະກິດພາຍໃນ, ສາຂາ, ໜ່ວຍບໍລິການ, ບໍລິສັດໃນກຸ່ມ ແລະ ຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດ ພາຍໃນທີ່ເຄື່ອນໄຫວຢູ່ ສປປ ລາວ ຫລື ຕ່າງປະເທດ; ສາຂາທະນາຄານທຸລະກິດ, ບໍລິສັດໃນກຸ່ມ ແລະ ຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດຕ່າງປະເທດ ທີ່ເຄື່ອນໄຫວຢູ່ ສປປ ລາວ.

## ໝວດທີ II
## ການສ້າງຕັ້ງ ແລະ ໂຄງຮ່າງການຈັດຕັ້ງ ຂອງທະນາຄານທຸລະກິດ

**ມາດຕາ 5. ສຳນວນຄຳຮ້ອງຂໍສ້າງຕັ້ງ**

ສຳນວນຄຳຮ້ອງຂໍສ້າງຕັ້ງທະນາຄານທຸລະກິດ ປະກອບມີເອກະສານຕົ້ນຕໍ ດັ່ງນີ້:

1. ແຜນທຸລະກິດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1.1. ທີ່ຕັ້ງສຳນັກງານ, ໂຄງສ້າງດ້ານກຳມະສິດ ແລະ ລາຍລະອຽດຂອງກິດຈະການ;

1.2 ຂອບເຂດຕະຫລາດ ແລະ ການວິເຄາະຕະຫລາດ;

1.3 ລາຍລະອຽດກ່ຽວກັບທຶນເບື້ອງຕົ້ນ, ຊັບສິນ, ຄັງຂະຫຍາຍການຜະລິດ, ແຜນການເພີ່ມທຶນໃນແຕ່ລະປີ (ຖ້າມີ), ແຜນການນຳໃຊ້ທຶນ ຊຶ່ງກວມເອົາການລົງທຶນໃນຊັບສິງທີ່, ການປະກອບວັດຖຸເຕັກນິກ, ທຶນໝູນວຽນໃນໄລຍະຫ້າປີເບື້ອງຕົ້ນ;

1.4. ການຄາດຄະເນລາຍຮັບ-ລາຍຈ່າຍ ສຳລັບໄລຍະຫ້າປີເບື້ອງຕົ້ນ.

2. ໂຄງຮ່າງການຈັດຕັ້ງຂອງທະນາຄານທຸລະກິດ ຕ້ອງມີລາຍລະອຽດກ່ຽວກັບໂຄງສ້າງທາງດ້ານການບໍລິຫານຈັດການ ແລະ ການເຄື່ອນໄຫວວຽກງານພາຍໃນ ທີ່

ສ່ອງແສງໃຫ້ເຫັນເຖິງຂີດຄວາມສາມາດຂອງຕົນໃນການດໍາເນີນງານ, ສາຍການລາຍງານ ແລະ ພະນັກງານໃນຕໍາແໜ່ງທີ່ສໍາຄັນ ລວມທັງບັນດາບໍລິສັດໃນກຸ່ມ ສາຂາ ຫລື ຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດ.

3. ໃບຢັ້ງຢືນຖານະດ້ານການເງິນຂອງຜູ້ຖືຮຸ້ນ ຊຶ່ງມີລາຍລະອຽດດັ່ງນີ້:

3.1. ສໍາລັບຜູ້ຖືຮຸ້ນ ທີ່ເປັນບຸກຄົນ ຕ້ອງມີເອກະສານເຊັ່ນ: ໃບຢັ້ງຢືນເງິນຝາກ, ໃບຢັ້ງຢືນກໍາມະສິດໃນຊັບສິນ, ໃບແຈ້ງໜີ້ສິນ ຫລື ເອກະສານການກູ້ຢືມຕ່າງໆ ຫລື ແຫລ່ງທຶນທີ່ຈະມາລົງທຶນສ້າງຕັ້ງທະນາຄານທຸລະກິດ ຫລື ເອກະສານອື່ນໆ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

3.2. ສໍາລັບຜູ້ຖືຮຸ້ນ ທີ່ເປັນນິຕິບຸກຄົນ ຕ້ອງມີເອກະສານເຊັ່ນ: ໃບສະຫລຸບຊັບສິນບັດທີ່ຜ່ານການກວດສອບ ໂດຍຜູ້ກວດສອບບັນຊີພາຍນອກສາມປີສຸດທ້າຍຕິດຕໍ່ກັນ, ໃບຢັ້ງຢືນກ່ຽວກັບການເປັນຜູ້ຖືຮຸ້ນລາຍໃຫຍ່, ຜູ້ຖືຮຸ້ນທີ່ມີຜົນປະໂຫຍດໃນທະນາຄານ ຫລື ສະຖາບັນການເງິນອື່ນ ລວມທັງໜີ້ສິນ, ການກູ້ຢືມ, ກິດຈະການ ຫລື ຜົນປະໂຫຍດທາງດ້ານທຸລະກິດ, ລວມທັງແຫລ່ງທຶນທີ່ນໍາໃຊ້ເຂົ້າໃນການລົງທຶນສ້າງຕັ້ງທະນາຄານທຸລະກິດ ແລະ ເອກະສານອື່ນໆ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

4. ສໍາເນົາບັດປະຈໍາຕົວ ຫລື ໜັງສືຜ່ານແດນ, ໃບແຈ້ງໂທດຂອງຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ. ສໍາລັບນິຕິບຸກຄົນຕ້ອງມີສໍາເນົາໃບທະບຽນວິສາຫະກິດ;

5. ປະຫວັດໃນການດໍາເນີນທຸລະກິດ ແລະ ວິຊາຊີບຂອງຜູ້ບໍລິຫານໃນໄລຍະຫ້າປີຜ່ານມາ, ໃບຢັ້ງຢືນລະດັບການສຶກສາ, ໃບຢັ້ງຢືນການຜ່ານງານ;

6. ບັນຊີລາຍຊື່ຜູ້ຖືຮຸ້ນ ແລະ ອັດຕາສ່ວນຂອງການຖືຮຸ້ນທີ່ເຊັນຮັບຮູ້ ໂດຍຜູ້ຖືຮຸ້ນ.

ສໍາລັບທະນາຄານທຸລະກິດຕ່າງປະເທດ ທີ່ມີຈຸດປະສົງຢາກສ້າງຕັ້ງທະນາຄານໃນກຸ່ມ, ສາຂາຢູ່ ສປປ ລາວ ຕ້ອງໄດ້ຮັບການຕົກລົງເຫັນດີຢ່າງເປັນລາຍລັກອັກສອນຈາກອົງການຄຸ້ມຄອງຂອງປະເທດຕົນເສັຍກ່ອນ ແລະ ຕ້ອງປະກອບເອກະສານຄືກັນກັບການຂໍສ້າງຕັ້ງທະນາຄານທຸລະກິດ. ນອກຈາກນີ້ ຍັງຕ້ອງມີມະຕິຕົກລົງຂອງສະພາບໍລິຫານທະນາຄານດັ່ງກ່າວ ພ້ອມທັງຢັ້ງຢືນຮັບປະກັນວ່າທະນາຄານຂອງຕົນຈະຕ້ອງຮັບຜິດຊອບພັນທະຕ່າງໆ ທີ່ສາຂາຂອງຕົນກໍ່ຂຶ້ນຢູ່ ສປປ ລາວ.

## ມາດຕາ 6. ໃບອະນຸຍາດສ້າງຕັ້ງຊົ່ວຄາວ

ຜູ້ຂໍອະນຸຍາດສ້າງຕັ້ງທະນາຄານທຸລະກິດ ຈະໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ຖ້າມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກໍານົດໄວ້ໃນວັກທີ 2 ມາດຕາ 11 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ. ໃບອະນຸຍາດຊົ່ວຄາວເປັນພຽງໃບຢັ້ງຢືນດ້ານຫລັກການກ່ຽວກັບການອະນຸຍາດສ້າງຕັ້ງ. ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງຊົ່ວຄາວ ບໍ່ສາມາດເຄື່ອນໄຫວທຸລະກິດໄດ້, ແຕ່ສາມາດນໍາໃຊ້ເພື່ອປະກອບເປັນຫລັກຖານອ້າງອີງ

ປະຕິບັດເງື່ອນໄຂເພີ່ມເຕີມ ເຊັ່ນ: ການຂໍອະນຸຍາດປຸກສ້າງສຳນັກງານທະນາຄານ, ການໂອນທຶນຈົດທະບຽນເຂົ້າ ສປປ ລາວ ແລະ ອື່ນໆ ຕາມລະບຽບກົດໝາຍກຳນົດໄວ້.

ໃບອະນຸຍາດຊົ່ວຄາວມີອາຍຸການນຳໃຊ້ຮ້ອຍແປດສິບວັນນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ. ກໍລະນີການປະຕິບັດເງື່ອນໄຂເພີ່ມເຕີມ ມີຄວາມຄືບໜ້າແຕ່ບໍ່ສາມາດປະຕິບັດສຳເລັດພາຍໃນເວລາທີ່ກຳນົດໄວ້ ກໍສາມາດຕໍ່ອາຍຸໄດ້ຄັ້ງລະເກົ້າສິບວັນ ແຕ່ທັງໝົດບໍ່ໃຫ້ເກີນສອງຄັ້ງ.

## ມາດຕາ 7. ໂຄງປະກອບຂອງທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ

ໃນການຂໍອະນຸຍາດສ້າງຕັ້ງທະນາຄານທຸລະກິດ ຫລື ສາຂາທະນາຄານທຸລະກິດຕ່າງປະເທດ ຜູ້ຂໍສ້າງຕັ້ງຕ້ອງມີທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ. ທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ ປະກອບດ້ວຍເງິນ ແລະ ວັດຖຸ. ການຖອກທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ ທີ່ເປັນວັດຖຸນັ້ນບໍ່ໃຫ້ເກີນສິບສ່ວນຮ້ອຍ ຂອງທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ. ທຶນເປັນວັດຖຸ ອາດປະກອບດ້ວຍພາຫະນະ, ວັດຖຸອຸປະກອນເຕັກນິກ ແລະ ອື່ນໆ.

ທະນາຄານແຫ່ງ ສປປ ລາວ ສາມາດປ່ຽນແປງອັດຕາສ່ວນທຶນທີ່ເປັນວັດຖຸ ໃຫ້ເໝາະສົມໃນແຕ່ລະໄລຍະ.

## ມາດຕາ 8. ການນຳໃຊ້ທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ສາມາດນຳໃຊ້ທຶນຈົດທະບຽນ ຫລື ເງິນລົງທຶນຕ່ຳສຸດ ເຂົ້າໃນການກໍ່ສ້າງສຳນັກງານ, ການປະກອບວັດຖຸອຸປະກອນເຕັກນິກ ແລະ ນຳໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

## ມາດຕາ 9. ການຖືຮຸ້ນໃນທະນາຄານທຸລະກິດ

ການຖືຮຸ້ນໃນທະນາຄານທຸລະກິດຂອງບຸກຄົນຜູ້ໜຶ່ງ ຫລື ຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່, ບຸກຄົນທີ່ມີສາຍພົວພັນຜົວເມັຍ, ຍາດສາຍຕັ້ງ, ບຸກຄົນທີ່ມີຜົນປະໂຫຍດທາງດ້ານທຸລະກິດກັບຜູ້ບໍລິຫານທະນາຄານທຸລະກິດ ຫລື ຜູ້ຖືຮຸ້ນລາຍໃຫຍ່ ລວມທັງຜູ້ທີ່ມີຜົນປະໂຫຍດສຳຄັນຢູ່ໃນນິຕິບຸກຄົນອື່ນ ຊຶ່ງທະນາຄານທຸລະກິດມີຜົນປະໂຫຍດທີ່ສຳຄັນ ລວມເຂົ້າກັນເກີນສິບສ່ວນຮ້ອຍຂຶ້ນໄປ ຊຶ່ງເປັນການຖືຮຸ້ນຫລາຍກວ່າຜູ້ຖືຮຸ້ນອື່ນໆ ຖືວ່າເປັນຜູ້ມີອຳນາດຕັດສິນບັນຫາຕໍ່ການເຄື່ອນໄຫວຂອງທະນາຄານທຸລະກິດ,

ນອກຈາກວ່າບຸກຄົນເຫລົ່ານັ້ນສາມາດຢັ້ງຢືນໄດ້ວ່າພວກຕົນມີຄວາມເປັນເອກະລາດ ແລະ ເປັນເຈົ້າກຳມະສິດໃນຮຸ້ນທີ່ຕົນຖືຢ່າງແທ້ຈິງ.

ໃນກໍລະນີເຫັນວ່າ ບຸກຄົນໃດໜຶ່ງເປັນຜູ້ມີອຳນາດຕັດສິນບັນຫາຕໍ່ການບໍລິຫານຈັດການທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ສາມາດກຳນົດໃຫ້ທະນາຄານທຸລະກິດດັ່ງກ່າວປະຕິບັດເງື່ອນໄຂ ດັ່ງລຸ່ມນີ້:

1. ກຳນົດໃຫ້ສະພາບໍລິຫານຂອງທະນາຄານທຸລະກິດດັ່ງກ່າວ ຕ້ອງມີສະມາຊິກຈາກພາຍນອກເປັນສ່ວນໃຫຍ່;
2. ລະບົບການລົງຄະແນນສຽງຕໍ່ບັນຫາທີ່ສຳຄັນຂອງທະນາຄານທຸລະກິດ ຕ້ອງອີງໃສ່ຄະແນນສຽງສ່ວນຫລາຍ ແຕ່ສອງສ່ວນສາມຂຶ້ນໄປ ແລະ ໄດ້ຮັບສຽງເຫັນດີເປັນສ່ວນໃຫຍ່ຈາກຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ;
3. ມີລະບຽບພາຍໃນ ທີ່ກຳນົດເງື່ອນໄຂບໍ່ໃຫ້ຜູ້ຖືຮຸ້ນລາຍໃຫຍ່ ມີອຳນາດຕັດສິນບັນຫາກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ພຽງຜູ້ດຽວ;
4. ເງື່ອນໄຂອື່ນໆ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

## ມາດຕາ 10. ກົນໄກການເຄື່ອນໄຫວຂອງສະພາບໍລິຫານ

ສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ ເຄື່ອນໄຫວວຽກງານຂອງຕົນຕາມລະບອບປະຊຸມ ເພື່ອໃຫ້ຜູ້ອຳນວຍການໃຫຍ່ປະຕິບັດລະບອບລາຍງານການບໍລິຫານວຽກງານຕາມເນື້ອໃນ ແລະ ກຳນົດເວລາທີ່ສະພາບໍລິຫານກຳນົດໄວ້ .

ຄະນະກຳມະການສະພາບໍລິຫານ ຕ້ອງປະຕິບັດໜ້າທີ່ໃນການຄຸ້ມຄອງ ແລະ ກວດກາ ໂດຍຜ່ານການທົບທວນ ແລະ ກວດກາບົດລາຍງານທາງດ້ານການເງິນ ແລະ ການຄຸ້ມຄອງບໍລິຫານໃນແຕ່ລະໄລຍະ ຊຶ່ງລາຍງານໂດຍຜູ້ບໍລິຫານ ທີ່ເຮັດໜ້າທີ່ປະຈຳການຂອງທະນາຄານທຸລະກິດ. ສະພາບໍລິຫານປະຕິບັດສິດ ແລະ ໜ້າທີ່ໃນການຕິດຕາມກວດກາ, ແຕ່ບໍ່ເຮັດໜ້າທີ່ບໍລິຫານຈັດການວຽກງານປະຈຳວັນຂອງທະນາຄານທຸລະກິດ. ສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານກຳນົດນະໂຍບາຍ, ກົນໄກ ແລະ ລະບຽບຫລັກການເປັນລາຍລັກອັກສອນ ເພື່ອຊີ້ນຳໃຫ້ຜູ້ອຳນວຍການໃຫຍ່ທະນາຄານທຸລະກິດ ຈັດຕັ້ງປະຕິບັດ.

ສະພາບໍລິຫານ ຕ້ອງຮັບຜິດຊອບໂດຍກົງຕໍ່ຜົນເສັຍຫາຍຂອງທະນາຄານທຸລະກິດ ຊຶ່ງເກີດຈາກການວາງນະໂຍບາຍທີ່ຜິດພາດ. ໃນກໍລະນີການວາງນະໂຍບາຍຂອງສະພາບໍລິຫານ ບໍ່ຈະແຈ້ງ ຫລື ບໍ່ຄົບຖ້ວນ ຫາກກໍ່ຜົນເສັຍຫາຍຕໍ່ທະນາຄານທຸລະກິດ ສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ຕ້ອງຮັບຜິດຊອບຮ່ວມກັນຕໍ່ຜົນເສັຍຫາຍດັ່ງກ່າວ. ຜູ້ອຳນວຍການໃຫຍ່ ຕ້ອງຮັບຜິດຊອບຕໍ່ຜົນເສັຍຫາຍທີ່ເກີດຂຶ້ນຕໍ່ທະນາຄານທຸລະກິດ ຊຶ່ງເນື່ອງມາຈາກການບໍ່ປະຕິບັດ ຫລື ປະຕິບັດບໍ່ຄົບຖ້ວນ, ບໍ່ຖືກຕ້ອງຕາມນະໂຍບາຍທີ່ສະພາບໍລິຫານວາງອອກ.

ມາດຕາ 11. **ຮູບແບບດຳເນີນກອງປະຊຸມສະພາບໍລິຫານ**

ສະພາບໍລິຫານ ສາມາດດຳເນີນກອງປະຊຸມໃນຮູບແບບ ດັ່ງລຸ່ມນີ້:

1. ກອງປະຊຸມຮ່ວມຂອງສະມາຊິກສະພາບໍລິຫານ;
2. ດຳເນີນກອງປະຊຸມ ຜ່ານລະບົບວີດີໂອ;

ໃນທຸກຮູບແບບດຳເນີນກອງປະຊຸມ ຕ້ອງມີບົດບັນທຶກເປັນລາຍລັກອັກສອນ ແລະ ລົງລາຍເຊັນໂດຍຜູ້ເຂົ້າຮ່ວມ. ສຳລັບການດຳເນີນກອງປະຊຸມຜ່ານລະບົບວີດີໂອ ຕ້ອງມີການບັນທຶກສຽງ ແລະ ພາບ ເພື່ອເກັບຮັກສາໄວ້.

3. ເມື່ອມີຄວາມຈຳເປັນຕົກລົງບັນຫາໃດໜຶ່ງ ປະທານສະພາບໍລິຫານສາມາດສົ່ງຈົດໝາຍວຽນ ໃຫ້ສະມາຊິກສະພາບໍລິຫານ ເພື່ອລົງຄະແນນສຽງໂດຍບໍ່ມີການເປີດກອງປະຊຸມ.

ມາດຕາ 12. **ການສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ**

ທະນາຄານທຸລະກິດພາຍໃນ ສາມາດສ້າງຕັ້ງບໍລິສັດໃນກຸ່ມ, ສາຂາ ແລະ ຫ້ອງການຜູ້ຕາງໜ້າຂອງຕົນຢູ່ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ. ສຳລັບການສ້າງຕັ້ງໜ່ວຍບໍລິການຂອງທະນາຄານທຸລະກິດນັ້ນ ແມ່ນຂຶ້ນກັບການພິຈາລະນາຂອງທະນາຄານທຸລະກິດດັ່ງກ່າວ ແຕ່ຕ້ອງແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນສ້າງຕັ້ງເປັນຕົ້ນໄປ ພ້ອມທັງຄັດຕິດມະຕິຕົກລົງຂອງກອງປະຊຸມສະພາບໍລິຫານ ກ່ຽວກັບການອະນຸມັດສ້າງຕັ້ງໜ່ວຍບໍລິການດັ່ງກ່າວ.

ທະນາຄານທຸລະກິດທີ່ສ້າງຕັ້ງຂຶ້ນໃໝ່ ສາມາດຂະຫຍາຍສາຂາຂອງຕົນຕາມແຜນທຸລະກິດທີ່ໄດ້ຮັບການຮັບຮອງຈາກທະນາຄານແຫ່ງ ສປປ ລາວ. ແຕ່ຕ້ອງປະກອບເອກະສານເພີ່ມເຕີມເຊັ່ນ: ກົດລະບຽບຄຸ້ມຄອງສາຂາ, ປະຫວັດຜູ້ບໍລິຫານ ແລະ ອື່ນໆ ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ. ທະນາຄານທຸລະກິດ ທີ່ໄດ້ຮັບໃບອານຸຍາດສ້າງຕັ້ງຖາວອນແລ້ວ ຈຶ່ງສາມາດສະເໜີຂໍສ້າງຕັ້ງສາຂາຂອງຕົນຂຶ້ນໄດ້.

ທະນາຄານແຫ່ງ ສປປ ລາວ ອອກບົດແນະນຳລະອຽດ ກ່ຽວກັບເງື່ອນໄຂ ແລະ ການປະກອບເອກະສານ ຂໍສ້າງຕັ້ງບໍລິສັດໃນກຸ່ມ ແລະ ສາຂາຂອງທະນາຄານທຸລະກິດ.

ມາດຕາ 13. **ຂອບເຂດການເຄື່ອນໄຫວຂອງສາຂາ**

ສາຂາທະນາຄານທຸລະກິດພາຍໃນ ແລະ ຕ່າງປະເທດ ສາມາດເຄື່ອນໄຫວທຸລະກິດການທະນາຄານ ເຊັ່ນ: ການລະດົມເງິນຝາກ, ການສະໜອງສິນເຊື່ອ, ການຊື້

ຂາຍເງິນຕາຕ່າງປະເທດ, ການໃຫ້ບໍລິການຊຳລະ ແລະ ລົງທຶນ ຕາມການມອບໝາຍຂອງສຳນັກງານໃຫຍ່ ໂດຍໄດ້ຮັບການຕົກລົງເຫັນດີ ຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 14. ຂອບເຂດການເຄື່ອນໄຫວຂອງໜ່ວຍບໍລິການ**

ໜ່ວຍບໍລິການຂອງທະນາຄານທຸລະກິດ ສາມາດໃຫ້ບໍລິການຮັບຝາກເງິນ, ເບີກຖອນເງິນສົດ, ໂອນເງິນຕາມຄຳສັ່ງຂອງລູກຄ້າ, ໃຫ້ການບໍລິການແລກປ່ຽນເງິນຕາຕ່າງປະເທດ ແລະ ອື່ນໆ ຕາມການມອບໝາຍຂອງສາຂາທະນາຄານທຸລະກິດ ຫລື ສຳນັກງານໃຫຍ່.

**ມາດຕາ 15. ຂອບເຂດການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າທະນາຄານທຸລະກິດຕ່າງປະເທດ**

ຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດຕ່າງປະເທດ ສາມາດເຄື່ອນໄຫວເກັບກຳຂໍ້ມູນ, ສຶກສາຄວາມອາດສາມາດເປັນໄປໄດ້ໃນການລົງທຶນ ແລະ ປະສານງານດ້ານເອກະສານຕ່າງໆ ເພື່ອສະເໜີຂໍລົງທຶນ.

## ໝວດທີ III
## ການດຳເນີນທຸລະກິດດ້ານການເງິນ

**ມາດຕາ 16. ການດຳເນີນທຸລະກິດດ້ານການເງິນ**

ທະນາຄານທຸລະກິດ ສາມາດດຳເນີນທຸລະກິດທາງດ້ານການເງິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ, ແຕ່ໃນນັ້ນ ການດຳເນີນທຸລະກິດໃຫ້ເຊົ່າ, ການປະກັນໄພ ແລະ ທຸລະກິດກ່ຽວກັບການຄ້ຳປະກັນການຈຳໜ່າຍ, ການຊື້-ຂາຍຫລັກຊັບ ຕ້ອງສ້າງເປັນນິຕິບຸກຄົນໜຶ່ງສະເພາະ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງໄດ້ກຳນົດໄວ້.

**ມາດຕາ 17. ເງື່ອນໄຂໃນການດຳເນີນທຸລະກິດທາງດ້ານການເງິນ**

ທະນາຄານທຸລະກິດ ທີ່ມີຄວາມຕ້ອງການດຳເນີນທຸລະກິດດ້ານການເງິນ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຖານະການເງິນດີ;
2. ປະຕິບັດລະບຽບກ່ຽວກັບການຮັກສາຄວາມໝັ້ນຄົງໄດ້ດີ;
3. ສາມາດປະຕິບັດເງື່ອນໄຂ ກ່ຽວກັບການດຳເນີນທຸລະກິດດ້ານການເງິນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 18. ການຄວບທຸລະກິດ, ການຊື້ຮຸ້ນ ແລະ ການຂາຍຊັບສິນ**

ທະນາຄານແຫ່ງ ສປປ ລາວ ອອກລະບຽບກ່ຽວກັບການຄວບທຸລະກິດ, ຊື້ຮຸ້ນ ຫລື ການຂາຍຊັບສິນ ທີ່ສຳຄັນຂອງທະນາຄານທຸລະກິດ ຕາມທີ່ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ໂດຍອີງໃສ່ເງື່ອນໄຂດັ່ງນີ້ :

1. ມີຄວາມເໝາະສົມດ້ານການເງິນ, ຮັບປະກັນການປະຕິບັດອັດຕາສ່ວນທາງດ້ານການເງິນເພື່ອຄວາມໝັ້ນຄົງ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ;
2. ຮັບປະກັນການກະຈາຍຄວາມສ່ຽງໃນການລົງທຶນ.

**ມາດຕາ 19. ການບໍລິການດ້ວຍລະບົບເອເລັກໂຕຼນິກ**

ການບໍລິການດ້ວຍລະບົບເອເລັກໂຕຼນິກ ແມ່ນການບໍລິການດ້ວຍເຄື່ອງມືທີ່ທັນສະໄໝ ເຊັ່ນ: ການອອກບັດເອເລັກໂຕຼນິກ, ລະບົບໂຮມແບັງຄິງ, ໂຟນແບັງຄິງ, ອິນເຕີເນັດແບັງຄິງ ແລະ ອື່ນໆ.

ທະນາຄານທຸລະກິດ ສາມາດໃຫ້ການບໍລິການລູກຄ້າຂອງຕົນດ້ວຍລະບົບເອເລັກໂຕຼນິກ ແຕ່ຕ້ອງມີລະບຽບກ່ຽວກັບການຄຸ້ມຄອງການໃຫ້ບໍລິການດັ່ງກ່າວ, ມີລະບົບຮັກສາຄວາມປອດໄພທີ່ເໝາະສົມ ແລະ ຕ້ອງໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ອອກລະບຽບຄຸ້ມຄອງກ່ຽວກັບການບໍລິການດ້ວຍລະບົບເອເລັກໂຕຼນິກ.

## ໝວດທີ IV
## ການກວດກາ

**ມາດຕາ 20. ສິດ ແລະ ໜ້າທີ່ ຂອງຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ**

ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ນອກຈາກຈະປະຕິບັດຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລ້ວ ຍັງມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ກວດກາບົດລາຍງານ, ເອກະສານອື່ນໆ ຂອງຜູ້ກວດສອບບັນຊີຈາກພາຍນອກ ຫລື ບຸກຄົນອື່ນທີ່ກ່ຽວຂ້ອງ;
2. ປຶກສາຫາລືກັບຜູ້ກວດສອບບັນຊີຈາກພາຍນອກ ກ່ຽວກັບບົດລາຍງານ ຫລື ຂໍ້ສັງເກດຂອງຜູ້ກວດສອບດັ່ງກ່າວ;
3. ກວດກາບໍລິສັດໃນກຸ່ມຂອງທະນາຄານທຸລະກິດ ເມື່ອເຫັນວ່າຈຳເປັນ. ເພື່ອຮັບປະກັນບໍ່ໃຫ້ມີການດຳເນີນທຸລະກຳທີ່ບໍ່ຖືກຕ້ອງລະຫວ່າງທະນາຄານທຸລະກິດ ແລະ ບໍລິສັດໃນກຸ່ມ.

### ມາດຕາ 21. ການດຳເນີນການກວດກາ

ການກວດກາທະນາຄານທຸລະກິດ ປະກອບດ້ວຍການກວດກາຕາມແຜນການປະຈຳປີ ແລະ ກວດກາແບບສຸກເສີນ ເມື່ອເຫັນວ່າມີຄວາມຈຳເປັນ.

ການກວດກາຕາມແຜນການປະຈຳປີ ແມ່ນການກວດກາເປັນປົກກະຕິຕາມແຜນທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ. ສ່ວນການກວດກາແບບສຸກເສີນ ແມ່ນການກວດກາໃນກໍລະນີທີ່ມີເຫດການໃດໜຶ່ງເກີດຂຶ້ນ ຫລື ມີຄວາມຈຳເປັນຕ້ອງພິສູດຢັ້ງຢືນບັນຫາໃດໜຶ່ງ ທີ່ເປັນການຮີບດ່ວນ.

ຂັ້ນຕອນການດຳເນີນການກວດກາ ໃຫ້ປະຕິບັດຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

### ມາດຕາ 22. ບົດສະຫລຸບການກວດກາ

ພາຍຫລັງດຳເນີນການກວດກາທະນາຄານທຸລະກິດ ຕ້ອງມີບົດສະຫລຸບການກວດກາ ຊຶ່ງລົງລາຍເຊັນໂດຍຜູ້ກວດກາ ແລະ ຜູ້ອຳນວຍການໃຫຍ່ ຫລື ຜູ້ອຳນວຍການສາຂາຂອງທະນາຄານທຸລະກິດ. ບົດສະຫລຸບການກວດກາ ຕ້ອງຊີ້ໃຫ້ເຫັນເນື້ອໃນຂອງການກວດກາ, ບັນຫາທີ່ກວດພົບເຫັນ ແລະ ຄຳແນະນຳຂອງຜູ້ກວດກາໃນການແກ້ໄຂບັນຫາ.

## ໝວດທີ V
## ການຟື້ນຟູ, ການຍຸບເລີກ ແລະ ການຖອນໃບອະນຸຍາດ

### ມາດຕາ 23. ການຟື້ນຟູທະນາຄານທຸລະກິດ

ວິທີການຟື້ນຟູທະນາຄານທຸລະກິດ ມີດັ່ງນີ້:

1. ດຳເນີນການປັບປຸງໂຄງສ້າງຂອງທະນາຄານທຸລະກິດຄືນໃໝ່, ໃນນັ້ນລວມທັງການຮັບເອົາຜູ້ຖືຮຸ້ນລາຍໃໝ່ ແລະ ການລົງທຶນໃໝ່;
2. ຄວບ ຫລື ຂາຍຮຸ້ນໃຫ້ທະນາຄານທຸລະກິດອື່ນ ທີ່ເຂັ້ມແຂງກວ່າ;
3. ການຊ່ວຍເຫລືອຂອງລັດຖະບານ ແລະ ກອງທຶນປົກປ້ອງຜູ້ຝາກເງິນ.

### ມາດຕາ 24. ການຍຸບເລີກທະນາຄານທຸລະກິດ

ທະນາຄານທຸລະກິດ, ສາຂາທະນາຄານ ຈະຖືກຍຸບເລີກດ້ວຍຄວາມສະໝັກໃຈ ຫລື ຖືກຍຸບເລີກແບບບັງຄັບ ຕາມການຕົກລົງຂອງທະນາຄານແຫ່ງ ສປປ ລາວ.

ມາດຕາ 25. **ການຍຸບເລີກດ້ວຍຄວາມສະໝັກໃຈ**

ການຍຸບເລີກທະນາຄານທຸລະກິດ, ສາຂາທະນາຄານທຸລະກິດ ດ້ວຍຄວາມສະໝັກໃຈ ແມ່ນການຍຸບເລີກບົນພື້ນຖານການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ ຫລື ສະພາບໍລິຫານ; ທະນາຄານທຸລະກິດທຸລະກິດດັ່ງກ່າວ ຕ້ອງມີຖານະການເງິນພຽງພໍເພື່ອຊໍາລະສະສາງ.

ທະນາຄານທຸລະກິດ ທີ່ມີຈຸດປະສົງຍຸບເລີກການດໍາເນີນທຸລະກິດຂອງຕົນ ຕ້ອງປະກອບສໍານວນຄໍາຮ້ອງ ຍື່ນຕໍ່ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ. ສໍານວນຄໍາຮ້ອງ ປະກອບດ້ວຍ:

1. ຄໍາຮ້ອງຂໍຍຸບເລີກ ເຊັນໂດຍຜູ້ອໍານວຍການໃຫຍ່;
2. ມະຕິກອງປະຊຸມຜູ້ຖືຮຸ້ນ ສໍາລັບການຍຸບເລີກທະນາຄານທຸລະກິດ ຫລື ມະຕິກອງປະຊຸມສະພາບໍລິຫານ ສໍາລັບການຍຸບເລີກສາຂາທະນາຄານທຸລະກິດ;
3. ໃບລາຍງານຖານະການເງິນ ທີ່ໄດ້ຮັບການຢັ້ງຢືນການກວດສອບຈາກພາຍນອກ;
4. ແຜນການຊໍາລະສະສາງ;
5. ເອກະສານອື່ນໆ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ກໍານົດອອກ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາການຮ້ອງຂໍຍຸບເລີກ ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນທີ່ໄດ້ຮັບສໍານວນຄໍາຮ້ອງຂໍຍຸບເລີກທີ່ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ທະນາຄານທຸລະກິດທີ່ໄດ້ຮັບອະນຸຍາດໃຫ້ຍຸບເລີກ ຕ້ອງພິມເຜີຍແຜ່ກ່ຽວກັບການອະນຸຍາດໃຫ້ຍຸບເລີກໃຫ້ມວນຊົນຊາບຢ່າງກວ້າງຂວາງ ໂດຍຜ່ານໜັງສືພິມທ້ອງຖິ່ນ ແລະ ລະດັບຊາດ ຢ່າງຕໍ່ເນື່ອງກັນສີ່ສິບຫ້າວັນ ແລະ ຕ້ອງແຕ່ງຕັ້ງຄະນະຊໍາລະສະສາງ ເພື່ອດໍາເນີນການຊໍາລະສະສາງ. ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຜູ້ຕິດຕາມການດໍາເນີນວຽກງານຂອງຄະນະຊໍາລະສະສາງດັ່ງກ່າວ. ຫ້າມທະນາຄານທຸລະກິດສືບຕໍ່ດໍາເນີນທຸລະກິດນັບແຕ່ວັນໄດ້ຮັບອານຸຍາດໃຫ້ຍຸບເລີກທະນາຄານເປັນຕົ້ນໄປ.

ມາດຕາ 26. **ການຍຸບເລີກແບບບັງຄັບ**

ການຍຸບເລີກທະນາຄານທຸລະກິດແບບບັງຄັບ ແມ່ນການຍຸບເລີກຕາມການຕົກລົງຂອງທະນາຄານແຫ່ງ ສປປ ລາວ ໃນກໍລະນີທີ່ກໍານົດໄວ້ໃນ ຂໍ້ 2, 3, 4, 5, 7 ແລະ 8 ຂອງມາດຕາ 80 ຂອງກດໝາຍວ່າດ້ວຍທະນາຄານທຸລະກິດ.

ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດດໍາເນີນທຸລະກິດ ແລະ ແຕ່ງຕັ້ງຄະນະຊໍາລະສະສາງ. ການຊໍາລະສະສາງແມ່ນໃຫ້ປະຕິບັດຕາມລະບຽບການ ແລະ ຂັ້ນຕອນຕາມທີ່ກໍານົດໄວ້ໃນ ມາດຕາ 74, 75, 76, 77, 78 ແລະ 79 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ.

## ໝວດທີ VI
## ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 27. ການແກ້ໄຂການລະເມີດ

ໃນເວລາມີການລະເມີດລະບຽບກົດໝາຍທະນາຄານທຸລະກິດ ສາມາດແກ້ໄຂດ້ວຍຄວາມສະໝັກໃຈ ຫລື ຖືກນຳໃຊ້ມາດຕະການທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82, 83, 84, 85, 86 ແລະ 87 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ .

### ມາດຕາ 28. ການແກ້ໄຂການລະເມີດດ້ວຍຄວາມສະໝັກໃຈ

ມາດຕະການແກ້ໄຂການລະເມີດດ້ວຍຄວາມສະໝັກໃຈ ແມ່ນການແກ້ໄຂການລະເມີດຂອງທະນາຄານທຸລະກິດ ດ້ວຍຄວາມຕື່ນຕົວຂອງທະນາຄານທຸລະກິດເອງ ໂດຍມີການຮັບຮູ້ຈາກທະນາຄານແຫ່ງ ສປປ ລາວ, ຊຶ່ງການລະເມີດດັ່ງກ່າວ ບໍ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງບຸກຄົນ ແລະ ເປັນການລະເມີດທີ່ບໍ່ຮ້າຍແຮງ.

ການແກ້ໄຂການລະເມີດດ້ວຍຄວາມສະໝັກໃຈ ມີ 2 ຮູບການຄື: ມະຕິຕົກລົງໃນການແກ້ໄຂບັນຫາຂອງສະພາບໍລິຫານ ແລະ ບົດບັນທຶກ.

1. ມະຕິຕົກລົງ ແມ່ນການຕົກລົງຂອງສະພາບໍລິຫານກ່ຽວກັບແກ້ໄຂຂໍ້ຂາດຕົກບົກພ່ອງຂອງທະນາຄານທຸລະກິດ ລວມທັງການກຳນົດວິທີ, ເວລາ ແລະ ບຸກຄົນຜູ້ຮັບຜິດຊອບໃນການແກ້ໄຂຂໍ້ຂາດຕົກບົກພ່ອງ ທີ່ກວດພົບໂດຍຜູ້ກວດສອບ. ມະຕິຕົກລົງຂອງສະພາບໍລິຫານ ຕ້ອງສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ຊາບ.

2. ບົດບັນທຶກ ແມ່ນການບັນທຶກການຕົກລົງ ເພື່ອແກ້ໄຂບັນຫາການລະເມີດລະຫວ່າງສະພາບໍລິຫານຂອງທະນາຄານທຸລະກິດ ແລະ ຜູ້ກວດກາ ຊຶ່ງມີການກຳນົດວຽກງານ, ເວລາທີ່ຕ້ອງປະຕິບັດ ແລະ ຕ້ອງລະບຸບຸກຄົນທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ບົດບັນທຶກດັ່ງກ່າວ ຕ້ອງໄດ້ເຊັນຮັບຮູ້ຈາກສະພາບໍລິຫານຂອງທະນາຄານທຸລະກິດ ແລະ ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 29. ມາດຕະການທາງບໍລິຫານ

ທະນາຄານແຫ່ງ ສປປ ລາວ ເປັນຜູ້ປະຕິບັດມາດຕະການທາງດ້ານບໍລິຫານ ຕໍ່ທະນາຄານທຸລະກິດ ທີ່ລະເມີດລະບຽບການຮັກສາຄວາມໝັ້ນຄົງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຫລື ໃນກໍລະນີເຫັນວ່າທະນາຄານທຸລະກິດ ບໍ່ແກ້ບັນຫາ ຕາມທີ່ກຳນົດໄວ້ໃນມາດຕາ 28 ຂອງດຳລັດສະບັບນີ້.

ໃນການນຳໃຊ້ມາດຕະການທາງດ້ານບໍລິຫານຕໍ່ທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ຕ້ອງເຮັດເປັນລາຍລັກອັກສອນ ເພື່ອໃຫ້ທະນາຄານທຸລະກິດທີ່ລະເມີດ ໄດ້ຈັດຕັ້ງປະຕິບັດ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 30. ການຈັດຕັ້ງປະຕິບັດ

ທະນາຄານແຫ່ງ ສປປ ລາວ ກວດກາຄືນບັນດາທະນາຄານທຸລະກິດ ລວມທັງສາຂາທະນາຄານຕ່າງປະເທດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ກ່ອນການປະກາດໃຊ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ເພື່ອສັງລວມບັນຫາ, ກຳນົດມາດຕະການແກ້ໄຂ ແລະ ໃຫ້ທະນາຄານທຸລະກິດ ຈັດຕັ້ງປະຕິບັດໃຫ້ສອດຄ່ອງ ຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ.

ທະນາຄານທຸລະກິດ ລວມທັງສາຂາທະນາຄານຕ່າງປະເທດ ຕ້ອງສ້າງແຜນການ ໂດຍມີການກຳນົດໜ້າວຽກ, ເວລາ ແລະ ວິທີການຈັດຕັ້ງປະຕິບັດ ເພື່ອແກ້ໄຂບັນຫາທີ່ບໍ່ສອດຄ່ອງກັບກົດໝາຍ. ແຜນການດັ່ງກ່າວ ຕ້ອງໄດ້ຮັບຮອງໂດຍສະພາບໍລິຫານຂອງທະນາຄານທຸລະກິດ ແລ້ວສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ເພື່ອຕິດຕາມການປະຕິບັດ.

ທະນາຄານທຸລະກິດ ລວມທັງສາຂາທະນາຄານຕ່າງປະເທດ ທີ່ສ້າງຕັ້ງຂຶ້ນກ່ອນວັນປະກາດໃຊ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ຫາກບໍ່ປະຕິບັດການປັບປຸງແກ້ໄຂໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍທະນາຄານທຸລະກິດ ພາຍໃນກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້ ຈະຖືກປະຕິບັດຕາມມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ.

### ມາດຕາ 31. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ ແລະ ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ